ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງກະສິກຳ ແລະ ສິ່ງແວດລ້ອມ

ເລກທີ 0692 /ກສ
ນະຄອນຫຼວງວຽງຈັນ, ວັນທີ 20 FEB 2026

# ຄຳສັ່ງ
## ວ່າດ້ວຍ ການເພີ່ມທະວີຄວາມເຂັ້ມງວດ ໃນການຄຸ້ມຄອງການຜະລິດ, ສະກັດກັ້ນ ການລັກລອບ ນຳເຂົ້າ, ຈຳໜ່າຍ ອາຫານສັດ ແລະ ຢາສັດຕະວະແພດ

ເຖິງ:
- ທ່ານ ຫົວໜ້າ ຫ້ອງການ, ບັນດາກົມ, ສະຖາບັນ ແລະ ຫົວໜ່ວຍວິຊາການລະດັບສອງ ທີ່ຂຶ້ນກັບກະຊວງກະສິກຳ ແລະ ສິ່ງແວດລ້ອມ;
- ທ່ານ ຫົວໜ້າ ພະແນກກະສິກຳ ແລະ ສິ່ງແວດລ້ອມ ນະຄອນຫຼວງວຽງຈັນ, ແຂວງ;
- ທ່ານ ຫົວໜ້າ ຫ້ອງການກະສິກຳ ແລະ ສິ່ງແວດລ້ອມ ເມືອງ, ນະຄອນ.

- ອີງຕາມ ກົດໝາຍ ວ່າດ້ວຍການລ້ຽງສັດ ແລະ ການສັດຕະວະແພດ ສະບັບເລກທີ 08/ສພຊ, ລົງວັນທີ 11 ພະຈິກ 2016;
- ອີງຕາມ ດຳລັດ ວ່າດ້ວຍອາຫານສັດ ສະບັບເລກທີ 02/ລບ, ລົງວັນທີ 02 ມັງກອນ 2020;
- ອີງຕາມ ດຳລັດ ວ່າດ້ວຍຢາສັດຕະວະແພດ ສະບັບເລກທີ 199/ລບ, ລົງວັນທີ 13 ມີນາ 2020;
- ອີງຕາມ ດຳລັດ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງກະສິກຳ ແລະ ສິ່ງແວດລ້ອມ ສະບັບເລກທີ 534/ນຍ, ລົງວັນທີ 14 ສິງຫາ 2025;
- ອີງຕາມ ໜັງສືສະເໜີ ຂອງກົມລ້ຽງສັດ ແລະ ການປະມົງ ສະບັບເລກທີ 0209/ກລປ, ລົງວັນທີ 21 ມັງກອນ 2026;
- ອີງຕາມ ໜັງສືສະເໜີ ຂອງຫ້ອງການ ສະບັບເລກທີ 0696/ຫກ, ລົງວັນທີ 11 ກຸມພາ 2026.

ໃນໄລຍະຜ່ານມາ ຂະແໜງການກະສິກຳ ແລະ ສິ່ງແວດລ້ອມ ແຕ່ລະຂັ້ນ ໄດ້ເອົາໃຈໃສ່ຄຸ້ມຄອງວຽກງານອາຫານສັດ ແລະ ຢາສັດຕະວະແພດ ໄດ້ດີສົມຄວນ ໂດຍມີການໂຄສະນາເຜີຍແຜ່ ແລະ ຈັດຕັ້ງປະຕິບັດກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ຢ່າງເປັນຂະບວນ ແລະ ເຂັ້ມງວດ ພ້ອມກັນນັ້ນ ກະຊວງກະສິກຳ ແລະ ປ່າໄມ້ ກໍໄດ້ອອກແຈ້ງການ ສະບັບເລກທີ 1146/ກປ, ລົງວັນທີ 20 ມີນາ 2024 ໃຫ້ຜູ້ດຳເນີນທຸລະກິດກ່ຽວກັບອາຫານສັດ ແລະ ຢາສັດຕະວະແພດ ມາແຈ້ງຂຶ້ນທະບຽນອາຫານສັດ ແລະ ຢາສັດຕະວະແພດ ໃຫ້ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ ເພື່ອຮັບປະກັນການຄຸ້ມຄອງ ແລະ ຕິດຕາມ ກວດກາວຽກງານດັ່ງກ່າວ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນ ແນໃສ່ສົ່ງເສີມການນຳໃຊ້ອາຫານສັດ ແລະ ຢາສັດຕະວະແພດ ທີ່ມີຄຸນນະພາບ, ໄດ້ມາດຕະຖານ, ມີຄວາມປອດໄພຕໍ່ຊີວິດ, ສຸຂະພາບຂອງຄົນ, ສັດ ແລະ ສິ່ງທີ່ມີຊີວິດອື່ນ ລວມທັງການປົກປັກຮັກສາສິ່ງແວດລ້ອມ, ທັງເປັນການປົກປ້ອງ ແລະ ສົ່ງເສີມການລ້ຽງສັດ ແລະ ສັດນ້ຳ ຂອງ ສປປ ລາວ ໃຫ້ມີການຂະຫຍາຍຕົວ ແລະ ມີຄວາມໝັ້ນຄົງທາງດ້ານສະບຽງອາຫານ ພ້ອມທັງສະກັດກັ້ນການລັກລອບນຳເຂົ້າ, ຈຳໜ່າຍອາຫານສັດ ແລະ ຢາສັດຕະວະແພດ.

ຜ່ານການຈັດຕັ້ງປະຕິບັດຕົວຈິງ ໃນໄລຍະຜ່ານມາ ເຫັນວ່າ ມີບາງທ້ອງຖິ່ນ ຍັງປະຕິບັດ ກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ບໍ່ທັນໄດ້ດີ ເປັນຕົ້ນ ການອອກໃບອະນຸຍາດນຳເຂົ້າຜະລິດຕະພັນອາຫານສັດ ແລະ ຢາສັດຕະວະແພດ

ຍັງບໍ່ລວມສູນ ແລະ ຜູ້ປະກອບການຈຳນວນໜຶ່ງ ບໍ່ສະເໜີຂຶ້ນທະບຽນອາຫານສັດ ແລະ ຢາສັດຕະວະແພດ ນຳຂະແໜງການກະສິກຳ ແລະ ສິ່ງແວດລ້ອມ. ສະນັ້ນ, ເພື່ອແກ້ໄຂບັນຫາດັ່ງກ່າວ, ທັງເປັນການຊຸກຍູ້, ສົ່ງເສີມ ແລະ ປົກປ້ອງສິດຜົນປະໂຫຍດ ຂອງຜູ້ປະກອບການ ໃນການດຳເນີນທຸລະກິດກ່ຽວກັບອາຫານສັດ ແລະ ຢາສັດຕະວະແພດ ຈຶ່ງມີຄວາມຈຳເປັນ ຕ້ອງໄດ້ສືບຕໍ່ວຽກງານການຂຶ້ນທະບຽນອາຫານສັດ ແລະ ຢາສັດຕະວະແພດ ທຸກປະເພດ ໃຫ້ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ.

## ລັດຖະມົນຕີ ກະຊວງກະສິກຳ ແລະ ສິ່ງແວດລ້ອມ ອອກຄຳສັ່ງ:

1. ໃຫ້ ພະແນກກະສິກຳ ແລະ ສິ່ງແວດລ້ອມ ນະຄອນຫຼວງວຽງຈັນ, ແຂວງ ແລະ ຫ້ອງການກະສິກຳ ແລະ ສິ່ງແວດລ້ອມ ເມືອງ, ນະຄອນ ເພີ່ມທະວີຄວາມເຂັ້ມງວດ ແລະ ເອົາໃຈໃສ່ປະຕິບັດໜ້າທີ່ ແລະ ຂອບເຂດສິດຂອງຕົນໃນການຄຸ້ມຄອງ ແລະ ຕິດຕາມ ກວດກາ ການຜະລິດ, ສະກັດກັ້ນການລັກລອບນຳເຂົ້າ, ຈຳໜ່າຍອາຫານສັດ ແລະ ຢາສັດຕະວະແພດ ໃນຂອບເຂດທ້ອງຖິ່ນຂອງຕົນ;

2. ໃຫ້ ພະແນກກະສິກຳ ແລະ ສິ່ງແວດລ້ອມ ນະຄອນຫຼວງວຽງຈັນ, ແຂວງ ແລະ ຫ້ອງການກະສິກຳ ແລະ ສິ່ງແວດລ້ອມ ເມືອງ, ນະຄອນ ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ສືບຕໍ່ຈັດຕັ້ງການໂຄສະນາເຜີຍແຜ່ ດຳລັດວ່າດ້ວຍອາຫານສັດ ສະບັບເລກທີ 02/ລບ, ລົງວັນທີ 02 ມັງກອນ 2020, ດຳລັດ ວ່າດ້ວຍຢາສັດຕະວະແພດ ສະບັບເລກທີ 199/ລບ, ລົງວັນທີ 13 ມີນາ 2020 ແລະ ແຈ້ງການ ກ່ຽວກັບການຂຶ້ນທະບຽນອາຫານສັດ ແລະ ຢາສັດຕະວະແພດ ສະບັບເລກທີ 1146/ກປ, ລົງວັນທີ 20 ມີນາ 2024 ແລະ ຄຳສັ່ງສະບັບນີ້ ໃຫ້ສັງຄົມຮັບຊາບຢ່າງກວ້າງຂວາງ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ໂດຍຍົກໃຫ້ເຫັນ ຄວາມສຳຄັນ, ຄວາມຈຳເປັນ ແລະ ຜົນປະໂຫຍດທີ່ໄດ້ຮັບຈາກການຂຶ້ນທະບຽນ ອາຫານສັດ ແລະ ຢາສັດຕະວະແພດ ທີ່ຜະລິດຢູ່ພາຍໃນ ຫຼື ນຳເຂົ້າ ເພື່ອຈຳໜ່າຍ ແລະ ນຳໃຊ້ ຢູ່ ສປປ ລາວ ພ້ອມທັງຈັດຕັ້ງປະຕິບັດ ຢ່າງເຂັ້ມງວດ;

3. ບໍ່ອະນຸຍາດໃຫ້ ພະແນກກະສິກຳ ແລະ ສິ່ງແວດລ້ອມ ນະຄອນຫຼວງວຽງຈັນ, ແຂວງ ແລະ ຫ້ອງການກະສິກຳ ແລະ ສິ່ງແວດລ້ອມ ເມືອງ, ນະຄອນ ແລະ ພາກສ່ວນທີ່ກ່ຽວຂ້ອງ ອອກໃບອະນຸຍາດນຳເຂົ້າອາຫານສັດ ໂດຍບໍ່ຖືກຕ້ອງຢ່າງເດັດຂາດ, ການນຳເຂົ້າອາຫານສັດ ຕ້ອງປະຕິບັດຕາມມາດຕາ 28 ແລະ ມາດຕາ 49 ຂອງ ດຳລັດວ່າດ້ວຍອາຫານສັດ ສະບັບເລກທີ 02/ລບ, ລົງວັນທີ 02 ມັງກອນ 2020;

4. ບໍ່ອະນຸຍາດໃຫ້ ພະແນກກະສິກຳ ແລະ ສິ່ງແວດລ້ອມ ນະຄອນຫຼວງວຽງຈັນ, ແຂວງ, ຫ້ອງການກະສິກຳ ແລະ ສິ່ງແວດລ້ອມ ເມືອງ, ນະຄອນ ແລະ ພາກສ່ວນທີ່ກ່ຽວຂ້ອງ ອອກໃບອະນຸຍາດນຳເຂົ້າຢາສັດຕະວະແພດ ໂດຍບໍ່ຖືກຕ້ອງຢ່າງເດັດຂາດ, ການນຳເຂົ້າຢາສັດຕະວະແພດ ຕ້ອງປະຕິບັດຕາມ ມາດຕາ 31 ແລະ ມາດຕາ 57 ຂອງ ດຳລັດ ວ່າດ້ວຍຢາສັດຕະວະແພດ ສະບັບເລກທີ 199/ລບ, ລົງວັນທີ 13 ມີນາ 2020;

5. ຜູ້ປະກອບການ ກ່ຽວກັບ ການຜະລິດ, ນຳເຂົ້າ ແລະ ຈຳໜ່າຍ ອາຫານສັດ ກ່ອນຈະດຳເນີນການ ຕ້ອງໄດ້ເອົາຜະລິດຕະພັນຂອງຕົນ ໄປຂຶ້ນທະບຽນນຳກົມລ້ຽງສັດ ແລະ ການປະມົງ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 11 ຂອງດຳລັດວ່າດ້ວຍອາຫານສັດ ສະບັບເລກທີ 02/ລບ, ລົງວັນທີ 02 ມັງກອນ 2020 ແລະ ມາດຕາ 15 ຂອງຂໍ້ຕົກລົງ ວ່າດ້ວຍການຄຸ້ມຄອງໂຮງງານຜະລິດອາຫານສັດ ສະບັບເລກທີ 0675/ກປ, ລົງວັນທີ 22 ມັງກອນ 2025. ບໍ່ອະນຸຍາດໃຫ້ຈຳໜ່າຍຜະລິດຕະພັນອາຫານສັດ ທີ່ບໍ່ມີການຕິດສະຫຼາກ, ໃນກໍລະນີ ມີສະຫຼາກເປັນພາສາຕ່າງປະເທດ ຕ້ອງໄດ້ແປເປັນພາສາລາວ ຢ່າງຖືກຕ້ອງ ຈຶ່ງສາມາດຈຳໜ່າຍໄດ້;

6. ຜູ້ປະກອບການ ກ່ຽວກັບ ການຜະລິດ, ນຳເຂົ້າ ແລະ ຈຳໜ່າຍ ຢາສັດຕະວະແພດ ກ່ອນຈະດຳເນີນການ ຕ້ອງໄດ້ເອົາຜະລິດຕະພັນຂອງຕົນ ໄປຂຶ້ນທະບຽນນຳກົມລ້ຽງສັດ ແລະ ການປະມົງ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 11 ຂອງດຳລັດ ວ່າດ້ວຍຢາສັດຕະວະແພດ ສະບັບເລກທີ 199/ລບ, ລົງວັນທີ 13 ມີນາ 2020 ແລະ ມາດຕາ 17 ຂອງຂໍ້ຕົກລົງ ວ່າດ້ວຍການຄຸ້ມຄອງໂຮງງານຜະລິດຢາສັດຕະວະແພດ ສະບັບເລກທີ 4848/ກປ, ລົງວັນທີ 02 ຕຸລາ 2024;

7. ໃຫ້ ເຈົ້າໜ້າທີ່ສັດຕະວະແພດ, ພະນັກງານ-ລັດຖະກອນ ແລະ ພາກສ່ວນທີ່ກ່ຽວຂ້ອງ ຈົ່ງເຂັ້ມງວດໃນການຕິດຕາມ ກວດກາ ການນຳເຂົ້າຜະລິດຕະພັນ ອາຫານສັດ ແລະ ຢາສັດຕະວະແພດ. ຖ້າພົບເຫັນ ອາຫານສັດ ແລະ ຢາ

ສັດຕະວະແພດ ທີ່ຍັງບໍ່ໄດ້ຂຶ້ນທະບຽນ ແລະ ບໍ່ໄດ້ຮັບອະນຸຍາດນຳເຂົ້າ ຈາກກົມລ້ຽງສັດ ແລະ ການປະມົງ ໃຫ້ໂຈະການນຳເຂົ້າທັນທີ ພ້ອມທັງກວດສອບ ແລະ ບັນທຶກເປັນລາຍລັກອັກສອນ ໃຫ້ກົມລ້ຽງສັດ ແລະ ການປະມົງ;

8. ໃຫ້ກົມລ້ຽງສັດ ແລະ ການປະມົງ ແຕ່ງຕັ້ງຄະນະສະເພາະກິດ ເພື່ອສົມທົບກັບພະແນກກະສິກຳ ແລະ ສິ່ງແວດລ້ອມ ນະຄອນຫຼວງວຽງຈັນ, ແຂວງ ແລະ ຫ້ອງການກະສິກຳ ແລະ ສິ່ງແວດລ້ອມ ເມືອງ, ນະຄອນ ລົງກວດກາໂຮງງານຜະລິດອາຫານສັດ, ໂຮງປະສົມອາຫານສັດ, ຮ້ານຂາຍອາຫານສັດ, ໂຮງງານຜະລິດຢາສັດຕະວະແພດ ແລະ ຮ້ານຂາຍຢາສັດຕະວະແພດ ພ້ອມທັງ ຊຸກຍູ້, ແນະນຳ ໃຫ້ຜູ້ປະກອບການ ໄປຂຶ້ນທະບຽນນຳກົມລ້ຽງສັດ ແລະ ການປະມົງ ໃຫ້ສຳເລັດກ່ອນວັນທີ 30 ມິຖຸນາ 2026. ໃນກໍລະນີພົບເຫັນການລະເມີດ ແມ່ນຈະໄດ້ປະຕິບັດຕາມກົດໝາຍ ແລະ ລະບຽບການ;

9. ໃນການຈັດຕັ້ງປະຕິບັດຕົວຈິງ ຖ້າຫາກພົບເຫັນຂໍ້ຫຍຸ້ງຍາກ ໃຫ້ລາຍງານ ກົມລ້ຽງສັດ ແລະ ການປະມົງ, ກະຊວງກະສິກຳ ແລະ ສິ່ງແວດລ້ອມ ເພື່ອແກ້ໄຂຢ່າງທັນການ.

ຄຳສັ່ງສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

**ລັດຖະມົນຕີ**

ກະຊວງກະສິກຳ ແລະ ສິ່ງແວດລ້ອມ

ລັດຖະມົນຕີ

**ປອ. ລິນຄຳ ດວງສະຫວັນ**